**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 9673 /ພຊສ.ນວ

ນະຄອນຫຼວງວຽງຈັນ, ວັນທີ 03 OCT 2024

# ໃບຢັ້ງຢືນສິ່ງແວດລ້ອມ

- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 389/ລບ, ວັນທີ 20 ຕຸລາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 1097/ຈນວ, ລົງວັນທີ 21/12/2022;
- ອີງຕາມ ໜັງສືສະເໜີ ເລກທີ 3778/ກບພຮ, ວັນທີ 27/9/2024 ແລະ ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ໂຄງການປັບປຸງສະໜາມບິນສາກົນວັດໄຕ, ສະບັບເດືອນ ກັນຍາ 2024;
- ອີງຕາມ ໜັງສືສະເໜີ ຂອງຂະແໜງສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ເລກທີ 608/ຂສກ, ວັນທີ 2/10/2024.

**ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເຫັນດີຮັບຮອງເອົາບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ແກ່:**

**ຊື່ໂຄງການ:** ໂຄງການປັບປຸງສະໜາມບິນສາກົນວັດໄຕ

**ເຈົ້າຂອງໂຄງການ:** ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ

**ທີ່ຕັ້ງຂອງໂຄງການ:** ບ້ານ ວັດໄຕໃຫຍ່ທົ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ

**ເນື້ອທີ່ໂຄງການ:** 63,999 ຕາແມັດ

**ກຳນົດເວລາການນຳໃຊ້ໃບຢັ້ງຢືນ:** ເດືອນ ຕຸລາ 2024 - ເດືອນ ຕຸລາ 2026

ເຈົ້າຂອງໂຄງການຕ້ອງເອົາໃຈໃສ່ປະຕິບັດຕາມລະບຽບກົດໝາຍກ່ຽວຂ້ອງຢ່າງເຂັ້ມງວດ, ຄຸ້ມຄອງ, ຕິດຕາມກວດກາ ແລະ ລາຍງານໃຫ້ຂະແໜງການກ່ຽວຂ້ອງເປັນປົກກະຕິ. ນອກຈາກນັ້ນ, ເຈົ້າຂອງໂຄງການຕ້ອງປະຕິບັດເງື່ອນໄຂຕ່າງໆ ທີ່ໄດ້ລະບຸໄວ້ໃນດ້ານຫລັງຂອງໃບຢັ້ງຢືນສະບັບນີ້.

ໃບຢັ້ງຢືນສະບັບນີ້ ມີຜົນນຳໃຊ້ໄດ້ 02 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ**

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ບຸນຊົມ ຊົງວິໄລ

ເຈົ້າຂອງໂຄງການຕ້ອງໄດ້ປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

1. ຮັບຜິດຊອບໂດຍກົງຕໍ່ຂໍ້ມູນທີ່ໄດ້ລະບຸໄວ້ໃນບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ກໍລະນີມີບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເກີດຂຶ້ນເຈົ້າຂອງໂຄງການຕ້ອງຮັບຜິດຊອບແກ້ໄຂບັນຫາຜົນກະທົບ ແລະ/ຫຼື ປັບປຸງແຜນຄຸ້ມຄອງສິ່ງແວດລ້ອມທີ່ມີມາດຕະການແກ້ໄຂບັນຫາເລົ່ານັ້ນພ້ອມທັງຮັບປະກັນໃຫ້ມີງົບປະມານພຽງພໍໃນການຈັດຕັ້ງປະຕິບັດ;
2. ໃນເວລາດຳເນີນໂຄງການໃຫ້ເອົາໃຈໃສ່ຕິດຕາມກວດກາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເປັນຕົ້ນ: ບັນຫາສິ່ງເສດເຫຼືອ, ສຽງດັງ, ນ້ຳເປື້ອນ, ຝຸ່ນລະອອງ, ການສັນຈອນເຂົ້າ-ອອກໂຄງການ, ຄວາມປອດໄພຂອງພະນັກງານກຳມະກອນ ແລະ ອື່ນໆ ພ້ອມທັງຮັບປະກັນໃນການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງສິ່ງແວດລ້ອມໃຫ້ໄດ້ຕາມມາດຖານຂອງ ສປປ ລາວ ທີ່ໄດ້ລະບຸໄວ້ໃນແຜນຄຸ້ມຄອງສິ່ງແວດລ້ອມຢ່າງເຂັ້ມງວດ;
3. ໃນກໍລະນີເຈົ້າຂອງໂຄງການບໍ່ປະຕິບັດຕາມແຜນຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ແລະ ບັນດາເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນສະບັບນີ້ ຊຶ່ງພາໃຫ້ເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຢ່າງຫຼວງຫຼາຍ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ມີສິດຖອນ ຫຼື ສັ່ງຍົກເລີກຜົນບັງຄັບໃຊ້ໃບຢັ້ງຢືນສິ່ງແວດລ້ອມສະບັບນີ້;
4. ເຈົ້າຂອງໂຄງການຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ບົດແນະນຳທາງດ້ານວິຊາການຂອງຂະແໜງການກ່ຽວຂ້ອງຢ່າງເຂັ້ມງວດ ແລະ ລາຍງານການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງສິ່ງແວດລ້ອມໃຫ້ ພຊສ.ນວ ໃນທຸກໆ 06 ເດືອນ;
5. ເຈົ້າຂອງໂຄງການຕ້ອງໄດ້ປັບປຸງແຜນຄຸ້ມຄອງສິ່ງແວດລ້ອມໃຫ້ສອດຄ່ອງກັບສະພາບຄວາມເປັນຈິງພາຍຫຼັງທີ່ໄດ້ດຳເນີນກິດຈະການ ໃນໄລຍະ 02 ປີ ເພື່ອນຳສະເໜີໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫລວງວຽງຈັນ ພິຈາລະນາຕໍ່ອາຍຸໃບຢັ້ງຢືນສິ່ງແວດລ້ອມ;
6. ມອບໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງສີໂຄດຕະບອງ ສົມທົບກັບ ຫ້ອງການກ່ຽວຂ້ອງຂັ້ນເມືອງ, ອຳນາດການປົກຄອງບ້ານ ແລະ ໜ່ວຍງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມບ້ານ ເຮັດໜ້າທີ່ຕິດຕາມກວດກາຜົນກະທົບຕໍ່ກັບສິ່ງແວດລ້ອມ-ສັງຄົມ ແລະ ລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ ເປັນແຕ່ລະໄລຍະ.

ສຳເນົາສົ່ງ:

| | |
|---|---|
| 1. ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງສີໂຄດບອງ | 01 ສະບັບ |
| 2. ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 01 ສະບັບ |
| 3. ຂະແໜງສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ເກັບມ້ຽນ | 01 ສະບັບ |